**IMPORTANT INFORMATION REGARDING DISCONTINUATION OF ISSUANCE OF NONIMMIGRANT VISAS:**

The Secretary of Homeland Security has notified the Secretary of State that Laos denies or unreasonably delays accepting the return of its citizens, subjects, nationals or residents subject to final orders of removal from the United States, and the Secretary of State has ordered consular officers in Laos to discontinue granting all nonimmigrant visas for Lao citizens and nationals applying in Vientiane, with limited exceptions.

**As of April 1, 2020, the United States has discontinued issuance of all nonimmigrant visas (NIVs) for Lao citizens and nationals applying in Laos**, except for A1, A2, C2, G1, G2, G3, G4, NATO1, NATO2, NATO3, NATO4, NATO5, and NATO6 visas, and others whose travel is covered by Section 11 of the UN Headquarters Agreement, subject to limited exceptions. This action was taken pursuant to section 243(d) of the Immigration and Nationality Act (INA). Visa applications submitted before April 1, 2020, but not yet issued, will be subject to the discontinuation. Should an individual subject to the Secretary's order submit a visa application after April 1, 2020, the consular section will proceed with an interview. However, a consular officer will not be able to issue a visa to applicants subject to the Secretary's order until visa issuance is resumed.

Visa issuance covered by the Secretary's order for Laos will resume once the Secretary of Homeland Security sends the Secretary of State the notice required by U.S. law, relating to the country's acceptance of its nationals.

Consular operations at the U.S. Embassy in Vientiane will continue. These visa restrictions do not affect other consular services provided, including adjudication of applications from individuals not covered by the suspension.

Once these sanctions have been lifted, the Embassy may issue nonimmigrant visas to eligible visa applicants. The U.S. Department of State will provide information on how to continue with discontinued visa applications. Nonimmigrant visa applicants who were previously found ineligible for a visa and whose visa applications were refused on such basis, such as under INA 212(a), will not be reconsidered.

Applicants with an urgent matter and who need to travel immediately should follow the guidance provided at the Embassy's website to request an emergency appointment.

**Visas that have not expired will continue to be valid.**

## ຂໍ້ມູນສຳຄັນກ່ຽວກັບການຢຸດຕິໃນການອອກວີຊາຊົ່ວຄາວປະເພດຕ່າງໆ:

ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບໄດ້ແຈ້ງໃຫ້ລັດຖະມົນຕີກະຊວງການຕ່າງປະເທດວ່າ ປະເທດລາວໄດ້ປະຕິເສດ ຫຼື ເລື່ອນເວລາຢ່າງບໍ່ສົມເຫດສົມຜົນໃນການຮັບເອົາ ພົນລະເມືອງ ແລະ ປະຊາຊົນ (subjects, nationals or residents) ຂອງຕົນທີ່ຖືກຕັດສິນຂັ້ນສຸດທ້າຍໃຫ້ເນລະເທດອອກຈາກສະຫະລັດ ແລະ ລັດຖະມົນຕີກະຊວງການຕ່າງປະເທດໄດ້ສັ່ງໃຫ້ເຈົ້າໜ້າທີ່ກົງສຸນປະຈຳປະເທດລາວໃຫ້ຢຸດຕິການອອກວີຊາຊົ່ວຄາວທັງໝົດ ໂດຍມີຂໍ້ຍົກເວັ້ນຈຳກັດໃຫ້ແກ່ພົນລະເມືອງລາວ ແລະ ປະຊາຊົນລາວ (Lao nationals) ທີ່ຂໍວີຊາຢູ່ນະຄອນຫຼວງວຽງຈັນ.

ນັບຕັ້ງແຕ່ ວັນທີ 1 ເດືອນ ເມສາ

ປີ 2020, ສະຖານທູດສະຫະລັດອາເມລິກາປະຈຳນະຄອນຫຼວງວຽງຈັນໄດ້ຢຸດຕິການອອກວີ່ຊາຊົ່ວຄາວທັງໝົດໃຫ້ແກ່ຄົນສັນຊາດລາວ ແລະ ປະຊາຊົນລາວ (Lao nationals) ທີ່ຂໍວີຊາຢູ່ນະຄອນຫຼວງວຽງຈັນ ຍົກເວັ້ນວີຊາປະເພດ A1, A2, C2, G1, G2, G3, G4, NATO1, NATO2, NATO3 , NATO 4,

NATO5, ແລະ NATO6, ແລະ ວີຊາຊົ່ວຄາວປະເພດອື່ນໆທີ່ຕົກຢູ່ໃນມາດຕາທີ 11 ຂອງສັນຍາວ່າດ້ວຍສຳນັກງານໃຫຍ່ຂອງອົງການສະຫະປະຊາຊາດ, ໂດຍມີຂໍ້ຍົກເວັ້ນທີ່ຈຳກັດ. ການຢຸດຕິການອອກວີຊານີ້ໄດ້ຖືກປະຕິບັດຕາມກົດໝາຍໝວດທີ 243 (d) ວ່າດ້ວຍຄົນເຂົ້າເມືອງ ແລະ ສັນຊາດ (INA).

ເອກະສານຂໍວີຊາຊົ່ວຄາວທີ່ຍື່ນກ່ອນ ວັນທີ 1 ເດືອນ ເມສາ ປີ 2020, ແຕ່ວ່າຍັງບໍ່ໄດ້ອອກວີຊາໃຫ້ເທື່ອນັ້ນ ແມ່ນຈະຖືກໂຈະການພິຈາລະນາອອກວີຊາ. ສຳລັບບຸກຄົນໃດທີ່ຕົກຢູ່ໃນກໍລະນີຄຳສັ່ງຂອງລັດຖະມົນຕີ ທີ່ໄດ້ຍື່ນຄຳຮ້ອງຂໍວີຊາຫຼັງຈາກ ວັນທີ 1 ເດືອນ ເມສາ ປີ 2020 ນັ້ນທາງພະແນກກົງສຸນຈະດຳເນີນການສຳພາດ ແຕ່ວ່າເຈົ້າໜ້າທີ່ກົງສຸນຈະບໍ່ສາມາດອອກວີຊາໃຫ້ຜູ້ສະໝັກທີ່ສັງກັດຢູ່ໃນຄຳສັ່ງຂອງລັດຖະມົນຕີຈົນກວ່າການອອກວີຊາຈະກັບຄືນສູ່ສະພາບປົກກະຕິ.

ການອອກວີຊາຊົ່ວຄາວປະເພດຕ່າງໆພາຍໃຕ້ຄຳສັ່ງຂອງລັດຖະມົນຕີກະຊວງການຕ່າງປະເທດຂອງສະຫະລັດຕໍ່ປະເທດລາວຈະໄດ້ຮັບການດຳເນີນຕໍ່ກໍ່ຕໍ່ເມື່ອລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບຂອງສະຫະລັດໄດ້ແຈ້ງລັດຖະມົນຕີກະຊວງການຕ່າງປະເທດເປັນລາຍລັກອັກສອນທີ່ໄດ້ຖືກກຳນົດໄວ້ໃນກົດໝາຍຂອງສະຫະລັດກ່ຽວກັບການຍອມຮັບພົນລະເມືອງກັບຄືນປະເທດຊາດຂອງຕົນ.

ເມື່ອຂໍ້ຈຳກັດການອອກວີຊາຕ່າງໆເຫຼົ່ານີ້ຖືກຍົກເລີກແລ້ວ, ສະຖານທູດອາດອອກວີຊາຊົ່ວຄາວໃຫ້ຜູ້ສະໝັກທີ່ມີສິດໄດ້ຮັບວີຊາ. ສຳລັບຜູ້ສະໝັກຍື່ນວີຊາທີ່ຖືກຮັບການໂຈະນັ້ນ ກະຊວງການຕ່າງປະເທດຈະສືບຕໍ່ໃຫ້ຂໍ້ມູນໃນການດຳເນີນວີຊາໃນຂັ້ນຕອນຕໍ່ໄປ. ຜູ້ສະໝັກຍື່ນວີຊາຊົ່ວຄາວກ່ອນໜ້ານີ້ທີ່ຖືກກວດພົບວ່າບໍ່ມີສິດໄດ້ຮັບວີຊາ ແລະ ຄຳຮ້ອງຂໍວີຊາທີ່ຖືກປະຕິເສດບົນພື້ນຖານດັ່ງກ່າວເປັນຕົ້ນແມ່ນພາຍໃຕ້ກົດໝາຍໝວດທີ INA 212(a) ແມ່ນຈະບໍ່ໄດ້ຮັບການພິຈາລະນາໃໝ່.

ການເປີດໃຫ້ບໍລິການຢູ່ພະແນກກົງສຸນຂອງສະຖານທູດສະຫະລັດອາເມລິກາທີ່ນະຄອນຫຼວງວຽງຈັນຍັງຈະດຳເນີນຕໍ່ໄປ. ຂໍ້ຈຳກັດການອອກວີຊາເຫຼົ່ານີ້ຈະບໍ່ມີຜົນກະທົບຕໍ່ການບໍລິການດ້ານອື່ນໆຂອງພະແນກກົງສຸນເຊິ່ງລວມທັງການຕັດສິນຄຳຮ້ອງຂໍວີຊາຂອງບຸກຄົນທີ່ບໍ່ໄດ້ຢູ່ພາຍໃຕ້ຄຳສັ່ງຂອງການຢຸດຕິການອອກວີຊານີ້.

ຜູ້ສະໝັກຂໍວີຊາທີ່ມີບັນຫາຮີບດ່ວນ ແລະ ຜູ້ສະໝັກຂໍວີຊາທີ່ຕ້ອງການເດີນທາງດ່ວນຕ້ອງປະຕິບັດຕາມຄຳແນະນຳໃນເວັບໄຊທ໌ຂອງສະຖານທູດເພື່ອຂໍການນັດສຳພາດສຸກເສີນ.
**ວີຊາທີ່ຍັງບໍ່ໝົດອາຍຸແມ່ນສາມາດສືບຕໍ່ໃຊ້ໄດ້.**